ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຖານເອກອັກຄະລັດຖະທູດ

ແຫ່ງ ສປປ ລາວ ທີ່ ນະຄອນຫຼວງປາຣີ

# ສະບາຍດີປີໃໝ່ລາວ ພ.ສ 2568

ເນື່ອງໃນໂອກາດສົ່ງທ້າຍປີເກົ່າ ພ.ສ 2567 ແລະ ຕ້ອນຮັບປີໃໝ່ ພ.ສ 2568 ທີ່ຈະໝູນວຽນມາເຖິງ, ຂ້າພະເຈົ້າ ພ້ອມດ້ວຍ ພັນລະຍາ ແລະ ພະນັກງານທັງໝົດພາຍໃນ ສະຖານທູດ ແຫ່ງ ສປປ ລາວ ປະຈຳ ປະເທດຝຣັ່ງ ຂໍສົ່ງພອນໄຊອັນປະເສີດ ແລະ ຄວາມຮັກແພງຢ່າງຈິງໃຈ ມາຍັງພໍ່ແມ່ພີ່ນ້ອງຄົນເຊື້ອຊາດລາວທີ່ດຳລົງຊີວິດຢູ່ປະເທດຝຣັ່ງ ກໍ່ຄືຢູ່ທຸກແຫ່ງຫົນຂອງໂລກ ພ້ອມດ້ວຍຄອບຄົວທຸກທົ່ວໜ້າ ຈົ່ງມີສຸຂະພາບແຂງແຮງ, ມີຄວາມຜາສຸກ, ມີຄວາມຈະເລີນຮຸ່ງເຮືອງກ້າວໜ້າ, ມີຜົນສຳເລັດໃນໜ້າທີ່ວຽກງານອັນສູງສົ່ງຂອງບັນດາທ່ານ.

ປີໃໝ່, ຂໍນົບນ້ອມເອົາ ຄຸນ ແລະ ອານຸພາບຂອງພຣະສຣີຣັຕຕະນະຕຣັຍ ແລະ ສິ່ງສັກສິດຢູ່ໃນສາກົນລະໂລກມາກຳຈັດປັດເປົ່າສິ່ງໃດທີ່ບໍ່ດີ, ຄວາມມີອະຄະຕິຕໍ່ກັນ, ຄວາມໂສກເສົ້າຫງ່ອມເຫງົາ, ຄວາມເຫັນຜິດເປັນຖືກ, ການເຫັນກົງຈັກເປັນດອກບົວ, ເຄາະເຂັນອັນຮ້າຍ, ສັບພະທຸກ, ສັບພະໂສກ, ສັບພະໂຣກ, ສັບພະໄພ, ສັບພະຂຶດຽດຈັ່ງໄຮນາໆປະການ ຈົ່ງໃຫ້ໝົດໄປໃນປີເກົ່າ, ປີໃໝ່ຂໍໃຫ້ເປັນປີແຫ່ງສັນຕິສຸກ, ມີສິ່ງດີໆ, ມີຄວາມສາມັກຄີເປັນປຶກແຜ່ນຂອງປວງຊົນລາວໃນທຸກແຫ່ງຫົນ, ມີຄວາມເມດຕາປານີ, ອະໂຫສິກຳໃຫ້ແກ່ກັນແລະກັນ ແລະ ຂໍໃຫ້ມີແຕ່ຮອຍຍິ້ມ, ມີຄວາມເບີກບານມ່ວນຊື່ນ, ມີຄວາມຈະເລີນ ແລະ ມີຄວາມວັດທະນະຖາວອນ.

ໂຊກດີປີໃໝ່ ແລະ ຂໍໃຫ້ທຸກຄົນປະສົບໄປດ້ວຍ ຈະຕຸພະພອນສີ່ປະການ ອາຍຸ ວັນນະ ສຸຂະ ພາລະ ທຸກໆທ່ານດ້ວຍເຖີ້ນ.

ດ້ວຍຄວາມນັບຖື ແລະ ຮັກແພງຢ່າງສູງ,

ນະຄອນຫຼວງປາຣີ, ວັນທີ 10 ເມສາ 2025

ເອກອັກຄະລັດຖະທູດ

ຄຳອິນ ຄິດຈະເດດ